ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
************************

ທະນາຄານແຫ່ງ ສປປ ລາວ

ເລກທີ 04 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 01 APR 2015

# ຄໍາສັ່ງ

## ຂອງ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ
## ວ່າດ້ວຍ ການຫ້າມຫັກເງິນຄໍ້າປະກັນເງິນກູ້ ຂອງສະຖາບັນການເງິນ ຈຸລະພາກ ແລະ ການຮັບເງິນຝາກ ຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ

ເຖິງ: ທ່ານ ຜູ້ອໍານວຍການ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກ ທີ່ບໍ່ຮັບເງິນຝາກ

- ອີງຕາມ ກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມ ດໍາລັດ ວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 03 ຕຸລາ 2012;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງສະຖາບັນການເງິນ ສະບັບເລກທີ 579/ກຄສງ, ລົງວັນທີ 18 ມີນາ 2015

ໃນໄລຍະຜ່ານມາການເຄື່ອນໄຫວດໍາເນີນທຸລະກິດ ຂອງບັນດາສະຖາບັນການເງິນຈຸລະພາກ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ຊຶ່ງເປັນການປະກອບສ່ວນເຮັດໃຫ້ປະຊາຊົນ ສາມາດເຂົ້າເຖິງແຫຼ່ງທຶນໄດ້ສະດວກຫຼາຍຂຶ້ນ ເຮັດໃຫ້ຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນດີຂຶ້ນເທື່ອລະກ້າວ, ແຕ່ຄຽງຄູ່ດ້ານດີ ກໍ່ຍັງມີດ້ານທີ່ຕ້ອງໄດ້ເອົາໃຈໃສ່ປັບປຸງແກ້ໄຂ ໂດຍສະເພາະ ຍັງມີບາງສະຖາບັນການເງິນຈຸລະພາກ ໄດ້ຫັກເງິນຄໍ້າປະກັນເງິນກູ້ຂອງລູກຄ້າ ເຮັດໃຫ້ລູກຄ້າບໍ່ໄດ້ຮັບເງິນກູ້ເຕັມຕາມຈໍານວນທີ່ໄດ້ຕົກລົງກັນໄວ້ໃນສັນຍາກູ້ຢືມເງິນ ແລະ ຍັງໄດ້ເສຍອັດຕາດອກເບ້ຍແບບບໍ່ຍຸຕິທໍາ. ນອກຈາກນີ້ ຍັງມີບາງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ໄດ້ຮັບເງິນຝາກຈາກລູກຄ້າທົ່ວໄປ ຊຶ່ງບໍ່ສອດຄ່ອງກັບ ດໍາລັດ ວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 03 ຕຸລາ 2012.

ສະນັ້ນ, ເພື່ອເປັນແນວທາງໃນການຈັດຕັ້ງປະຕິບັດ ກ່ຽວກັບການຫ້າມຫັກເງິນຄໍ້າປະກັນເງິນກູ້ ຂອງສະຖາບັນການເງິນຈຸລະພາກ ແລະ ການຮັບເງິນຝາກ ຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ໃຫ້ມີຄວາມຍຸຕິທໍາ ແລະ ຖືກຕ້ອງຕາມລະບຽບຫຼັກການ.

## ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ອອກຄໍາສັ່ງ ດັ່ງນີ້:

1. ຫ້າມສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກ ທີ່ບໍ່ຮັບເງິນຝາກ ຫັກເງິນຄໍ້າປະກັນເງິນກູ້ຂອງລູກຄ້າ.

2. ຫ້າມສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຮັບເງິນຝາກຈາກລູກຄ້າທົ່ວໄປ. ຍົກເວັ້ນສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ທີ່ຫັນມາຈາກກອງທຶນ ຫຼື ໂຄງການຊ່ວຍເຫຼືອ ເພື່ອບໍລິຫານທຶນຊ່ວຍທະນາຄານບ້ານ ຫຼື ກອງທຶນບ້ານ ແມ່ນອະນຸຍາດໃຫ້ນຳໃຊ້ລະບົບບັນຊີແບບພິວພັນ.

3. ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຫາກລະເມີດຄຳສັ່ງສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ, ປັບໃໝ ແລະ ດຳເນີນຄະດີຕາມກົດໝາຍ ຫຼື ໜັກ.

4. ມອບໃຫ້ ກົມຄຸ້ມຄອງສະຖາບັນການເງິນ, ບັນດາສາຂາ ທະນາຄານແຫ່ງ ສປປ ລາວ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ ຕິດຕາມກວດກາ, ແນະນຳ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ຂອງບັນດາສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ.

5. ບັນດາ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

6. ຄຳສັ່ງສະບັບນີ້ ມີຜົນສັກສິດ ພາຍຫຼັງສິບຫ້າ (15) ວັນ ນັບແຕ່ວັນລົງໃນຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

ດຣ. ສົມພາວ ໄຟສິດ